ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 161 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 16-12-09

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍ**

**ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

~~~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;

- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 198/ສພຊ, ລົງວັນທີ 26 ພະຈິກ 2009 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 085/ຄປຈ, ລົງວັນທີ 10 ທັນວາ 2009.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

<u>*ມາດຕາ 1*</u> : ປະກາດໃຊ້ກົດໝາຍວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ.

<u>*ມາດຕາ 2*</u> : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ.**

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 198 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ
## ວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທໍາມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໃນວາລະປະຊຸມຕອນເຊົ້າຂອງວັນທີ 26 ພະຈິກ 2009,

### ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 26 ພະຈິກ 2009

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ ປະທານ

ທອງສິງ ທໍາມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 06 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 26 ພະຈິກ 2009

# ກົດໝາຍ
# ວ່າດ້ວຍ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ
## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ກໍານົດ ຫລັກການ, ລະບຽບການ, ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການຕິດຕາມ, ກວດກາວຽກງານຂອງ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເພື່ອຮັບປະກັນໃຫ້ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ຊາວໜຸ່ມລາວບັນດາເຜົ່າ ໄດ້ປະຕິບັດ ສິດ, ໜ້າທີ່, ພັນທະ ແລະ ຄວາມຮັບຜິດຊອບຂອງຕົນ ຢ່າງມີປະສິດທິຜົນ, ຍົກສູງຄວາມຮັບຜິດຊອບຂອງລັດ, ສັງຄົມ, ຄອບຄົວ ຕໍ່ການພັດທະນາ ແລະ ປົກປ້ອງ ຊາວໜຸ່ມ ແນໃສ່ສ້າງຄະນະຊາວໜຸ່ມ ໃຫ້ກາຍເປັນອົງການຈັດຕັ້ງທີ່ເຂັ້ມແຂງ ປະກອບສ່ວນເຂົ້າໃນການສຶກສາອົບຮົມ ແລະ ເຕົ້າໂຮມກໍາລັງຊາວໜຸ່ມ ໃຫ້ກາຍເປັນຜູ້ສືບທອດພາລະກິດປະຕິວັດຂອງພັກ, ຂອງຊາດ ແລະ ຕັ້ງໜ້າປະຕິບັດ ສອງໜ້າທີ່ຍຸດທະສາດ ຄື ປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃຫ້ປະຊາຊົນ ຮັ່ງມີ, ຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມມີປະຊາທິປະໄຕ, ຍຸຕິທໍາ ແລະ ສີວິໄລ.

**ມາດຕາ 2. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

**ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ** ແມ່ນ ການຈັດຕັ້ງຂອງຊາວໜຸ່ມລາວຜູ້ຫ້າວຫັນ, ດີເດັ່ນ, ໄດ້ຜ່ານການຝຶກຝົນຫລໍ່ຫລອມຈາກ ຂະບວນການຂອງມະຫາຊົນ, ເປັນອົງການຈັດຕັ້ງມະຫາຊົນໜຶ່ງ ໃນລະບົບການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນ ທີ່ມີພັກປະຊາຊົນ ປະຕິວັດລາວ ເປັນແກນນໍາ.

**ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ** ຂຽນອັກສອນຫຍໍ້ວ່າ: " ຄຊປປລ".

**ມາດຕາ 3. ການອະທິບາຍຄຳສັບ**

**ຄຳສັບຕ່າງໆ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້ :**

1. **ອົງການຈັດຕັ້ງການເມືອງ-ສັງຄົມ ໝາຍເຖິງ** ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນທີ່ມີພັກປະຊາຊົນປະຕິວັດລາວ ເປັນຜູ້ນຳພາ ຊຶ່ງປະກອບດ້ວຍ ຄຊປປລ, ສະຫະພັນແມ່ຍິງລາວ, ສະຫະພັນກຳມະບານລາວ, ສະຫະພັນນັກຮົບເກົ່າແຫ່ງຊາດ;
2. **ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ໝາຍເຖິງ** ຄະນະນຳຂອງຊາວໜຸ່ມ ຊຶ່ງຖືກເລືອກຕັ້ງ ໂດຍກອງປະຊຸມໃຫຍ່ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;
3. **ເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ໝາຍເຖິງ** ຜູ້ເປັນຫົວໜ້າຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ;
4. **ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຮາກຖານ ໝາຍເຖິງ** ການຈັດຕັ້ງຊາວໜຸ່ມຢູ່ບ້ານ, ສຳນັກງານ, ອົງການ, ຫົວໜ່ວຍການຜະລິດ, ການບໍລິການ, ສະຖາບັນການສຶກສາ, ໂຮງໝໍ ແລະ ກອງພັນນ້ອຍ, ກອງຮ້ອຍ ແລະ ທຽບເທົ່າໃນກຳລັງປະກອບອາວຸດ;
5. **ການຈັດຕັ້ງເຍົາວະຊົນ ໝາຍເຖິງ** ການຈັດຕັ້ງຂອງເດັກນ້ອຍລາວຜູ້ຫ້າວຫັນ, ດີເດັ່ນ ທີ່ມີອາຍຸ ແຕ່ ເກົ້າປີ ຫາ ສິບສີ່ປີ;
6. **ອະນຸຊົນ ໝາຍເຖິງ** ເດັກນ້ອຍລາວຜູ້ຫ້າວຫັນ, ດີເດັ່ນ ທີ່ມີອາຍຸແຕ່ ຫົກປີ ຫາ ແປດປີ.

**ມາດຕາ 4. ນະໂຍບາຍຂອງລັດ ກ່ຽວກັບວຽກງານຊາວໜຸ່ມ**

ລັດ ວາງນະໂຍບາຍ, ລະບຽບກົດໝາຍ, ກົນໄກ ແລະ ມາດຕະການຕ່າງໆ ຢ່າງເປັນລະບົບກ່ຽວກັບການຄຸ້ມຄອງ, ການພັດທະນາ, ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຊາວໜຸ່ມ ລວມທັງສິ່ງເສີມກິດຈະກຳ ການເຄື່ອນໄຫວທີ່ເປັນປະໂຫຍດໃຫ້ປະເທດຊາດ ແລະ ສັງຄົມ.

ລັດ ເອົາໃຈໃສ່ສຶກສາອົບຮົມ, ຊຸກຍູ້, ສິ່ງເສີມ, ສ້າງເງື່ອນໄຂ ໃຫ້ຊາວໜຸ່ມໄດ້ຮັບການຝຶກຝົນຫລໍ່ຫລອມ ແລະ ໄດ້ຮັບການພັດທະນາຮອບດ້ານ ເປັນຕົ້ນ ດ້ານສຸຂະພາບຮ່າງກາຍ ແລະ ຈິດໃຈ, ດ້ານຄຸນສົມບັດສົມທຳປະຕິວັດ, ການສຶກສາ, ວິຊາຊີບ, ຄວາມສາມາດ ເພື່ອກາຍເປັນຮຸ່ນຄົນສືບທອດພາລະກິດປະຕິວັດຂອງຊາດ.

ລັດ ຊຸກຍູ້, ສິ່ງເສີມ, ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃຫ້ຊາວໜຸ່ມ ໄດ້ເຂົ້າການຈັດຕັ້ງ ແລະ ຄຊປປລ ສາມາດປະຕິບັດພາລະບົດບາດ, ສິດ, ໜ້າທີ່ ຂອງຕົນ ເພື່ອດຶງດູດ ແລະ ເສີມຂະຫຍາຍກຳລັງແຮງຂອງຊາວໜຸ່ມ ເຂົ້າໃນການປະຕິບັດແນວທາງ, ນະໂຍບາຍ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ.

**ມາດຕາ 5. ຫລັກການກ່ຽວກັບວຽກງານຊາວໜຸ່ມ**

**ຄຊປປລ ເຄື່ອນໄຫວວຽກງານບົນພື້ນຖານຫລັກການ ດັ່ງນີ້:**

1. ຮັບປະກັນການນຳພາໂດຍກົງ, ຮອບດ້ານ ຂອງພັກປະຊາຊົນປະຕິວັດລາວ;

2. ຮັບປະກັນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບ ຂອງ ຄຊປປລ;
3. ປະຕິບັດຫລັກການລວມສູນປະຊາທິປະໄຕ;
4. ຕື່ນຕົວ, ສະໝັກໃຈ ແລະ ເປັນແບບຢ່າງ ນຳໜ້າ ໃນການປະຕິບັດວຽກງານຂອງຊາດ, ຂອງ ຊາວໜຸ່ມ ແລະ ເຂົ້າຮ່ວມຂະບວນການເຄື່ອນໄຫວຂອງມະຫາຊົນ;
5. ຮັບປະກັນການເຄື່ອນໄຫວ ດ້ວຍຫລາຍລັກສະນະ ແລະ ຫລາຍຮູບການ.

**ມາດຕາ 6. ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ, ຮ່ວມມື ກັບພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊາວໜຸ່ມ ເພື່ອເສີມສ້າງຄວາມສາມັກຄີ, ມິດຕະພາບ ແລະ ການພັດທະນາຊາວໜຸ່ມ ບົນພື້ນຖານ ແນວທາງການຕ່າງປະເທດ ຂອງ ສປປ ລາວ ດ້ວຍການແລກປ່ຽນບົດຮຽນ, ວັດທະນະທຳ, ເຕັກໂນໂລຢີ, ການຊ່ວຍເຫຼືອ, ຝຶກອົບຮົມ, ຍົກລະດັບຄວາມຮູ້ດ້ານວິຊາການ, ການປະຕິບັດສົນທິສັນຍາສາກົນ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II

# ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

## ໝວດທີ 1

## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ຄຊປປລ

**ມາດຕາ 7. ທີ່ຕັ້ງ ຂອງ ຄຊປປລ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນອົງການຈັດຕັ້ງມະຫາຊົນໜຶ່ງ ໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນ ທີ່ມີພັກປະຊາຊົນປະຕິວັດລາວ ເປັນແກນນຳ, ມີຖານະທຽບເທົ່າກັບອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງມະຫາຊົນອື່ນ.

**ມາດຕາ 8. ພາລະບົດບາດ ຂອງ ຄຊປປລ**

ຄຊປປລ ມີພາລະບົດບາດ ສຶກສາອົບຮົມຄຸນທາດການເມືອງ, ມູນເຊື້ອອັນດີງາມຂອງຊາດ ໃຫ້ຄົນຮຸ່ນໜຸ່ມຮັບຮູ້ ແລະ ເຂົ້າໃຈ, ເປັນຜູ້ປຸກລະດົມ, ເຕົ້າໂຮມຄວາມສາມັກຄີຊາວໜຸ່ມລາວບັນດາເຜົ່າ ເປັນປຶກແຜ່ນ, ເປັນຜູ້ຈັດຕັ້ງ, ນຳພາ ໂດຍກົງ, ຮອບດ້ານ ຕໍ່ການຈັດຕັ້ງ, ການເຄື່ອນໄຫວ ຂອງຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ, ເປັນຕົວແທນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ.

**ມາດຕາ 9. ສິດ ແລະ ໜ້າທີ່ ຂອງ ຄຊປປລ**

**ຄຊປປລ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:**

1. ຄົ້ນຄວ້າ ແລະ ສະເໜີແຜນຍຸດທະສາດ ກ່ຽວກັບການພັດທະນາຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ;
2. ສຶກສາອົບຮົມ ຊາວໜຸ່ມ, ເຍົາວະຊົນ-ອະນຸຊົນລາວບັນດາເຜົ່າ ໃຫ້ມີຄຸນສົມບັດສົບທໍາປະຕິວັດ, ນໍ້າໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຮູ້ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທໍາອັນດີງາມຂອງຊາດ ລວມທັງສະໜອງຂໍ້ມູນຂ່າວສານ ທີ່ຈໍາເປັນໃຫ້ ຊາວໜຸ່ມ;
3. ສ້າງຂະບວນການຂອງຊາວໜຸ່ມ ເພື່ອຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ ແລະ ມະຕິກອງປະຊຸມຂອງຕົນ;
4. ສ້າງ ແລະ ປັບປຸງການຈັດຕັ້ງ ຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງ ຮອບດ້ານ;
5. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ;
6. ສະເໜີສະມາຊິກຂອງຕົນເຂົ້າໃນການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນອື່ນ;
7. ປະກອບຄໍາຄິດຄໍາເຫັນ ຕໍ່ແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ເປັນຕົ້ນ ບັນຫາທີ່ກ່ຽວພັນກັບວຽກງານຂອງຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ.

## ໝວດທີ 2
## ລະບົບ, ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງ ຄຊປປລ

**ມາດຕາ 10. ລະບົບການຈັດຕັ້ງ**

**ລະບົບການຈັດຕັ້ງ ຂອງ ຄຊປປລ ມີ ສີ່ ຂັ້ນຄື:**

1. ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
2. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນ, ກະຊວງ, ອົງການ;
3. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເມືອງ, ເທດສະບານ;
4. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຮາກຖານ.

**ມາດຕາ 11. ໂຄງປະກອບການຈັດຕັ້ງ**

ໂຄງປະກອບການຈັດຕັ້ງ ຂອງ ຄຊປປລ ແຕ່ລະຂັ້ນ ໄດ້ກໍານົດໄວ້ໃນລະບຽບການສະເພາະ ໂດຍອີງຕາມຄວາມຮຽກຮ້ອງຕ້ອງການ ແລະ ເງື່ອນໄຂຕົວຈິງ ຂອງວຽກງານໃນແຕ່ລະໄລຍະ.

ສຳລັບໂຄງປະກອບການຈັດຕັ້ງ ຂອງ ຄຊປປລ ໃນກຳລັງປະກອບອາວຸດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 12. ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນ ຂອງ ຄຊປປລ ມີ ເລຂາ, ຮອງເລຂາ, ປະທານກວດກາ, ຮອງປະທານກວດກາ, ກຳມະການ ໃນຄະນະບໍລິຫານງານຈຳນວນໜຶ່ງ.

ໂດຍອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ບຸກຄະລາກອນດັ່ງກ່າວ ອາດຈະແມ່ນບຸກຄົນທີ່ມີອາຍຸເກີນກວ່າ ສາມສິບຫ້າປີ ກໍໄດ້.

ສຳລັບໂຄງປະກອບບຸກຄະລາກອນ ຂອງ ຄຊປປລ ຮາກຖານ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 13. ສິດ ແລະ ໜ້າທີ່ ຂອງເລຂາຄະນະບໍລິຫານງານ ຊປປລ**

ເລຂາຄະນະບໍລິຫານງານ ຊປປລ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ນຳພາ ການຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດ ຍຸດທະສາດການພັດທະນາຊາວໜຸ່ມ ໃນແຕ່ລະໄລຍະໃຫ້ປາກົດຜົນເປັນຈິງ;
2. ຊຸກຍູ້, ຕິດຕາມ ແລະ ກວດກາ ການເຄື່ອນໄຫວວຽກງານພາຍໃນ ແລະ ຕ່າງປະເທດ ຂອງ ຄຊປປລ;
3. ເປັນຜູ້ດຳເນີນ, ຮຽກໂຮມ ທັງເປັນປະທານກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ;
4. ສະເໜີ, ປຶກສາຫາລື, ປະສານສົມທົບ ວຽກງານສຳຄັນ ຂອງ ຄຊປປລ ກັບອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນອື່ນ ທີ່ເຫັນວ່າມີຄວາມຈຳເປັນ;
5. ວາງແຜນການ, ສະຫລຸບ ແລະ ລາຍງານສະພາບຮອບດ້ານ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ຕໍ່ກອງປະຊຸມຄະນະບໍລິຫານງານ ຊປປລ ແລະ ຂັ້ນເທິງ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 14. ສິດ ແລະ ໜ້າທີ່ຂອງຮອງເລຂາຄະນະບໍລິຫານງານ ຊປປລ**

ຮອງເລຂາຄະນະບໍລິຫານງານ ຊປປລ ມີ ໜ້າທີ່ຊ່ວຍເລຂາຄະນະບໍລິຫານງານ ຊປປລ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະ ຈະໄດ້ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງເລຂາຄະນະບໍລິຫານງານຂັ້ນຂອງຕົນ.

ໃນກໍລະນີທີ່ເລຂາຄະນະບໍລິຫານງານ ຊປປລ ຕິດຂັດ ແມ່ນ ຮອງເລຂາຄະນະບໍລິຫານງານ ຊປປລ ຜູ້ທີ່ຖືກມອບໝາຍ ຈາກເລຂາຄະນະບໍລິຫານງານ ຊປປລ ນັ້ນ ເປັນຜູ້ວ່າການແທນ.

## ໝວດທີ 3
## ການເຄື່ອນໄຫວ ຂອງ ຄຊປປລ

**ມາດຕາ 15. ການເຄື່ອນໄຫວ ຂອງ ຄຊປປລ**

**ຄຊປປລ ເຄື່ອນໄຫວຕາມ ສອງ ຮູບການ ຕົ້ນຕໍ ດັ່ງນີ້:**

- ການເຄື່ອນໄຫວທົ່ວໄປ;
- ການເຄື່ອນໄຫວໃນກອງປະຊຸມ;

ການເຄື່ອນໄຫວທົ່ວໄປ ແມ່ນ ການຈັດຕັ້ງຜັນຂະຫຍາຍບັນດາມະຕິທີ່ໄດ້ວາງອອກ ໃນແຕ່ລະກອງປະຊຸມ ຂອງ ຄຊປປລ, ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ມະຕິຄຳສັ່ງ ຕ່າງໆ.

ການເຄື່ອນໄຫວໃນກອງປະຊຸມ ແມ່ນ ການເຂົ້າຮ່ວມ ແລະ ການຄົ້ນຄວ້າປະກອບຄຳຄິດຄຳເຫັນເພື່ອຕົກລົງບັນຫາສຳຄັນຕ່າງໆ ໃນກອງປະຊຸມ.

**ມາດຕາ 16. ເນື້ອໃນການເຄື່ອນໄຫວ ຂອງ ຄຊປປລ**

ເນື້ອໃນຕົ້ນຕໍການເຄື່ອນໄຫວ ຂອງ ຄຊປປລ ມີ ດັ່ງນີ້:

- ການສຶກສາອົບຮົມການເມືອງ-ແນວຄິດ, ຍົກລະດັບຄວາມຮູ້, ສະໜອງຂໍ້ມູນ ຂ່າວສານ ດ້ານເຕັກນິກ-ວິທະຍາສາດ, ວັດທະນະທຳ-ສັງຄົມ;
- ການເຄື່ອນໄຫວສ້າງຂະບວນການດ້ານຕ່າງໆ;
- ການປັບປຸງກໍ່ສ້າງ ຄຊປປລ ແລະ ການຈັດຕັ້ງ ເຍົາວະຊົນ-ອະນຸຊົນ;
- ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ;
- ການເຄື່ອນໄຫວວຽກງານຕ່າງປະເທດ.

## ພາກທີ III
## ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ

**ມາດຕາ 17. ສະມາຊິກ ຊປປລ**

**ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ** ແມ່ນ ຊາວໜຸ່ມຜູ້ດີເດັ່ນ, ຫ້າວຫັນ ຊຶ່ງໄດ້ຜ່ານການຝຶກຝົນຫລໍ່ຫລອມ ໃນຂະບວນການຕົວຈິງຂອງມະຫາຊົນ, ມີເງື່ອນໄຂ ແລະ ມາດຕະຖານຄົບຖ້ວນ ທີ່ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ໄດ້ຮັບເຂົ້າເປັນສະມາຊິກຂອງຕົນ.

**ມາດຕາ 18. ເງື່ອນໄຂ ແລະ ມາດຕະຖານ ຂອງສະມາຊິກ ຊປປລ**

**ສະມາຊິກ ຊປປລ ມີເງື່ອນໄຂ ແລະ ມາດຕະຖານຄົບຖ້ວນ ດັ່ງນີ້:**

1. ເປັນພົນລະເມືອງລາວ ທີ່ມີອາຍຸ ແຕ່ ສິບຫ້າປີ ຫາ ສາມສິບຫ້າປີ;

2. ມີນ້ຳໃຈຮັກຊາດ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ ຄວາມສາມາດ, ມີຄວາມຫ້າວຫັນ ໃນຂະບວນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;
3. ເປັນເຈົ້າການຝຶກຝົນຫລໍ່ຫລອມຕົນເອງ ໃຫ້ກາຍເປັນພົນລະເມືອງດີຂອງຊາດ ເປັນຜູ້ສືບທອດທີ່ດີ ແລະ ເປັນຜູ້ທີ່ເຊື່ອຖື ຂອງສັງຄົມ;
4. ເປັນແບບຢ່າງນຳໜ້າໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ ແລະ ລະບຽບກົດໝາຍ ຂອງລັດ;
5. ມີຄວາມຕື່ນຕົວ, ສະໝັກໃຈ ປະຕິບັດກົດລະບຽບ ແລະ ມະຕິຂອງ ຄຊປປລ ຢ່າງເຂັ້ມງວດ;
6. ມີສຸຂະພາບດີ.

ສະມາຊິກ ຊປປລ ຜູ້ມີອາຍຸຄົບ ສາມສິບຫ້າປີ ສາມາດລາອອກຈາກການເປັນສະມາຊິກຂອງ ຄຊປປລ ຕາມການອະນຸມັດຂອງ ຄຊປປລ ຂັ້ນນັ້ນ.

### ມາດຕາ 19. ການເຄື່ອນໄຫວ ຂອງສະມາຊິກ ຊປປລ

ສະມາຊິກ ຊປປລ ເຄື່ອນໄຫວຕາມກົດລະບຽບ, ແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ຂອງ ຄຊປປລ ແຕ່ລະໄລຍະ.

### ມາດຕາ 20. ສິດ ແລະ ໜ້າທີ່ ຂອງສະມາຊິກ ຊປປລ

ສະມາຊິກ ຊປປລ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ ຮ່ຳຮຽນ ແລະ ປະຕິບັດແນວທາງ, ນະໂຍບາຍ, ລະບຽບກົດໝາຍ ແລະ ກົດລະບຽບ ຂອງ ຄຊປປລ;
2. ຝຶກຝົນຫລໍ່ຫລອມຕົນເອງໃຫ້ເປັນພົນລະເມືອງດີ, ມີນ້ຳໃຈຮັກຊາດ, ເພີ່ມທະວີຄວາມສາມັກຄີພາຍໃນສະມາຊິກ ແລະ ຊາວໜຸ່ມລາວບັນດາເຜົ່າ;
3. ບຳລຸງ, ຍົກລະດັບຄວາມຮູ້ ຄວາມສາມາດ ທາງດ້ານວິທະຍາສາດ, ເຕັກນິກ, ເຕັກໂນໂລຢີ ແລະ ວິຊາຊີບດ້ານຕ່າງໆ ເພື່ອໃຫ້ມີວຽກເຮັດງານທຳ;
4. ປະກອບຄຳຄິດຄຳເຫັນ, ລົງຄະແນນສຽງ ແລະ ສະເໜີ ຂໍ້ລິເລີ່ມຕ່າງໆ ຂອງຕົນ ຕໍ່ກອງປະຊຸມ ຄຊປປລ;
5. ເລືອກຕັ້ງ ແລະ ຮັບສະໝັກເລືອກຕັ້ງ ເຂົ້າໃນຄະນະບໍລິຫານງານ ຊປປລ ແຕ່ລະຂັ້ນ ຕາມເງື່ອນໄຂ ແລະ ມາດຕະຖານ ທີ່ໄດ້ກຳນົດໄວ້ໃນລະບຽບການ;
6. ສະເໜີ ຕໍ່ ຄຊປປລ ຊ່ວຍປົກປ້ອງໃນກໍລະນີທີ່ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຕົນຖືກລ່ວງລະເມີດ;
7. ໄດ້ຮັບຂໍ້ມູນຂ່າວສານຕ່າງໆ ຕາມລະບຽບການ;
8. ເຂົ້າຮ່ວມໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມລັດຖະທຳມະນູນ ແລະ ກົດໝາຍ ແລະ ການກໍ່ສ້າງ, ປັບປຸງ ຄຊປປລ, ກອງເຍົາວະຊົນ-ອະນຸຊົນ ໃຫ້ໜັກແໜ້ນເຂັ້ມແຂງ;

9. ເຄື່ອນໄຫວກິລາ–ກາຍຍະກຳ, ສິລະປະວັນນະຄະດີ ແລະ ກິດຈະກຳອື່ນ ທີ່ບໍ່ຂັດກັບລະບຽບກົດໝາຍ.

**ມາດຕາ 21. ພັນທະຂອງສະມາຊິກ ຊປປລ**

**ສະມາຊິກ ຊປປລ ມີ ພັນທະ ດັ່ງນີ້:**

1. ເຄົາລົບ, ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບ ຂອງ ຄຊປປລ;
2. ເປັນເຈົ້າການຄົ້ນຄວ້າຮໍ່າຮຽນ, ພັດທະນາສີມືແຮງງານ, ສະແຫວງຫາເຕັກໂນໂລຢີ ທັນສະໄໝ, ວິຊາຊີບ, ສ້າງວຽກເຮັດງານທຳ ທີ່ຖືກຕ້ອງຕາມກົດໝາຍ;
3. ເຄົາລົບນັບຖື, ເບິ່ງແຍງ ແລະ ໃຫ້ການຊ່ວຍເຫຼືອ ຄອບຄົວ, ພໍ່ແມ່ ຫລື ຜູ້ປົກຄອງ, ຜູ້ຊີງຄຸນວຸດທິ ແລະ ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ;
4. ປຸກລະດົມ ຂົນຂວາຍຊາວໜຸ່ມມະຫາຊົນ ເຂົ້າເປັນສະມາຊິກ ຊປປລ;
5. ເປັນແບບຢ່າງປະກອບສ່ວນໃນການປະຕິບັດພັນທະຮັບໃຊ້ຊາດ ເປັນຕົ້ນ ພັນທະປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ພັນທະອອກແຮງງານ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ;
6. ມີພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 22. ຜົນປະໂຫຍດຂອງສະມາຊິກ ຊປປລ**

ສະມາຊິກ ຊປປລ ໄດ້ຮັບຜົນປະໂຫຍດ ຕົ້ນຕໍ ດັ່ງນີ້:

1. ໄດ້ຮັບການເອົາໃຈໃສ່ ແລະ ມີເງື່ອນໄຂເຂົ້າເປັນສະມາຊິກພັກປະຊາຊົນປະຕິວັດລາວ;
2. ໄດ້ຮັບການກໍ່ສ້າງ, ບຳລຸງ, ຍົກລະດັບຄວາມຮູ້ ຄວາມສາມາດ ດ້ານຕ່າງໆ ເພື່ອໃຫ້ມີວຽກເຮັດງານທຳ;
3. ໄດ້ຮັບບຸລິມະສິດໃນດ້ານຕ່າງໆ ສຳລັບສະມາຊິກ ຊປປລ ຜູ້ທີ່ມີຜົນງານດີເດັ່ນ;
4. ໄດ້ຮັບການບັນຈຸ, ສັບຊ້ອນເຂົ້າໃນໜ້າທີ່ຕຳແໜ່ງງານຕ່າງໆ ລວມທັງການເລື່ອນຊັ້ນ, ຂັ້ນ, ຕຳແໜ່ງ ຕາມຄວາມຮູ້, ຄວາມສາມາດ ແລະ ເງື່ອນໄຂຕົວຈິງ;
5. ໄດ້ຮັບການພັດທະນາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;
6. ໄດ້ຮັບການຍ້ອງຍໍ, ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

# ພາກທີ IV

# ກອງປະຊຸມ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

**ມາດຕາ 23. ປະເພດກອງປະຊຸມ**

**ກອງປະຊຸມ ຄຊປປລ ມີ ສາມປະເພດ ຄື:**

- ກອງປະຊຸມໃຫຍ່;

- ກອງປະຊຸມສາມັນ;
- ກອງປະຊຸມວິສາມັນ.

### ມາດຕາ 24. ກອງປະຊຸມໃຫຍ່

**ກອງປະຊຸມໃຫຍ່ ຄຊປປລ ມີ ສີ່ ຂັ້ນ ດັ່ງນີ້:**

- ກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມ ທົ່ວປະເທດ;
- ກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມ ແຂວງ, ນະຄອນ, ກະຊວງ, ອົງການ;
- ກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມ ເມືອງ, ເທດສະບານ;
- ກອງປະຊຸມໃຫຍ່ສະມາຊິກ ຊປປລ ຮາກຖານ.

ກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມ ເປີດຂຶ້ນຫ້າປີໃດເທື່ອໜຶ່ງ. ໃນກໍລະນີຈຳເປັນ ອາດຈະເປີດໄວ ຫລື ຊ້າກວ່າກຳນົດກໍໄດ້ ແຕ່ບໍ່ໃຫ້ເກີນ ຫົກເດືອນ.

ສຳລັບກອງປະຊຸມໃຫຍ່ສະມາຊິກ ຊປປລ ຮາກຖານ ແມ່ນ ສາມປີໃດ ເປີດຂຶ້ນເທື່ອໜຶ່ງ. ໃນກໍລະນີຈຳເປັນ ອາດຈະເປີດໄວ ຫລື ຊ້າກວ່າກຳນົດກໍໄດ້ ແຕ່ບໍ່ໃຫ້ເກີນ ຫົກເດືອນ.

ກອງປະຊຸມໃຫຍ່ ຄຊປປລ ຂັ້ນໃດ ແມ່ນ ເລຂາຄະນະບໍລິຫານງານ ຊປປລ ຂັ້ນນັ້ນ ເປັນຜູ້ຮຽກໂຮມ ໂດຍແຈ້ງໃຫ້ກຳມະການໃນຄະນະບໍລິຫານງານ ຊປປລ ຂັ້ນຂອງຕົນ ຮູ້ກ່ອນລ່ວງໜ້າ ຫົກເດືອນ ເວັ້ນເສຍແຕ່ກອງປະຊຸມໃຫຍ່ ສະມາຊິກ ຊປປລ ຮາກຖານ ແມ່ນ ໜຶ່ງເດືອນ.

### ມາດຕາ 25. ສິດ ແລະ ໜ້າທີ່ ຂອງກອງປະຊຸມໃຫຍ່

ກອງປະຊຸມໃຫຍ່ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ ແລະ ຮັບຮອງເອົາບົດລາຍງານການເມືອງ ລວມທັງທິດທາງໜ້າທີ່ວຽກງານຂອງ ຄຊປປລ ຂັ້ນຂອງຕົນ;
2. ຄົ້ນຄວ້າ ແລະ ຮັບຮອງເອົາການປັບປຸງ, ດັດແປງກົດລະບຽບ ຂອງ ຄຊປປລ ສຳລັບກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ;
3. ເລືອກຕັ້ງຄະນະບໍລິຫານງານ ຊປປລ ຂັ້ນຂອງຕົນ ແລະ ເລືອກຕັ້ງຜູ້ແທນຂອງຕົນ ເຂົ້າໄປຮ່ວມກອງປະຊຸມໃຫຍ່ຂັ້ນເທິງຖັດຕົນ ຖ້າຫາກມີ;
4. ດຳເນີນກອງປະຊຸມຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານຊຸດໃໝ່ ເພື່ອຄັດເລືອກເອົາ ເລຂາ, ຮອງເລຂາ ແລະ ປະທານກວດກາ. ສຳລັບກອງປະຊຸມຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານສູນກາງ ຊປປລ ຍັງຄັດເລືອກເອົາຄະນະເລຂາທິການຂອງຕົນ ຫລື ຄະນະປະຈຳ ສຳລັບຄະນະບໍລິຫານງານ ຊປປລ ຂັ້ນແຂວງ ແລະ ເມືອງ;
5. ຮັບຮອງເອົາມະຕິກອງປະຊຸມໃຫຍ່ ຄຊປປລ ຂັ້ນຂອງຕົນ.

**ມາດຕາ 26. ກອງປະຊຸມສາມັນ**

ກອງປະຊຸມສາມັນ ແມ່ນ ກອງປະຊຸມຄົບຄະນະບໍລິຫານງານ ຊປປລ ຊຶ່ງດໍາເນີນໜຶ່ງຄັ້ງ ຕໍ່ປີ, ສໍາລັບກອງປະຊຸມ ຂັ້ນຮາກຖານນັ້ນ ໃຫ້ດໍາເນີນສອງຄັ້ງຕໍ່ປີ ໂດຍແມ່ນເລຂາຄະນະບໍລິຫານງານ ຂັ້ນນັ້ນ ເປັນຜູ້ຮຽກໂຮມ. ກ່ອນເປີດກອງປະຊຸມຄົບຄະນະບໍລິຫານງານນັ້ນ ເລຂາຄະນະບໍລິຫານງານ ຕ້ອງແຈ້ງໄປ ຍັງຄະນະບໍລິຫານງານ ຂັ້ນຂອງຕົນ ແລະ ການຈັດຕັ້ງຊາວໜຸ່ມຂັ້ນລຸ່ມ ຮັບຊາບກ່ອນ ສາມເດືອນ, ສ່ວນ ຮາກຖານ ແມ່ນ ໜຶ່ງເດືອນ. ກອງປະຊຸມສາມັນ ຕ້ອງມີຄະນະບໍລິຫານງານເຂົ້າຮ່ວມນໍາຢ່າງໜ້ອຍ ສອງ ສ່ວນສາມ ຈຶ່ງສາມາດເປີດກອງປະຊຸມໄດ້.

ໃນກໍລະນີຈໍາເປັນ ກອງປະຊຸມສາມັນ ອາດຈະເປີດໄວ ຫລື ຊ້າກວ່າກໍານົດກໍໄດ້ ແຕ່ບໍ່ໃຫ້ເກີນ ສາມເດືອນ ເວັ້ນເສຍແຕ່ກອງປະຊຸມສາມັນຂັ້ນຮາກຖານ ແມ່ນ ບໍ່ໃຫ້ເກີນໜຶ່ງເດືອນ.

**ມາດຕາ 27. ສິດ ແລະ ໜ້າທີ່ຂອງກອງປະຊຸມສາມັນ**

ກອງປະຊຸມສາມັນ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ ແລະ ຮັບຮອງເອົາບົດລາຍງານການເຄື່ອນໄຫວ, ທິດທາງວຽກງານປະຈໍາປີຂອງ ຄຊປປລ ຂັ້ນຂອງຕົນ;
2. ດໍາເນີນຊີວິດການເມືອງພາຍໃນຄະນະບໍລິຫານງານ ຊປປລ ຂັ້ນຂອງຕົນ ກ່ຽວກັບການ ປະຕິບັດວຽກງານປະຈໍາປີ;
3. ຄົ້ນຄວ້າ ສະເໜີແຕ່ງຕັ້ງເພີ່ມເຕີມຄະນະບໍລິຫານງານ ຊປປລ ຂັ້ນຂອງຕົນທີ່ຫວ່າງລົງ;
4. ຄົ້ນຄວ້າ, ປະກອບຄໍາເຫັນຕໍ່ການປັບປຸງ ຫລື ດັດແປງກົດລະບຽບ ຂອງ ຄຊປປລ ຫລື ກົດລະບຽບຂອງການຈັດຕັ້ງເຍົາວະຊົນ-ອະນຸຊົນ ຖ້າຫາກມີ;
5. ຕົກລົງບັນຫາສໍາຄັນຕ່າງໆ ຂອງ ຄຊປປລ ຂັ້ນຂອງຕົນ;
6. ຮັບຮອງເອົາມະຕິກອງປະຊຸມ ຄຊປປລ ຂັ້ນຂອງຕົນ.

**ມາດຕາ 28. ກອງປະຊຸມວິສາມັນ**

ກອງປະຊຸມວິສາມັນ ແມ່ນ ກອງປະຊຸມຄະນະບໍລິຫານງານ ຊປປລ ໃນລະຫວ່າງສອງກອງປະຊຸມ ສາມັນ ເພື່ອພິຈາລະນາ ວຽກງານຈໍາເປັນ, ສໍາຄັນ ແລະ ຮີບດ່ວນ ຕາມການສະເໜີ ຂອງຄະນະເລຂາທິການ ຫລື ຄະນະບໍລິຫານງານ ຊປປລ ຂັ້ນຂອງຕົນ ຢ່າງໜ້ອຍໜຶ່ງສ່ວນສີ່ ແລະ ມີຜູ້ເຂົ້າຮ່ວມຢ່າງໜ້ອຍສອງ ສ່ວນສາມ ຫຼື ໃນກໍລະນີຈໍາເປັນ ມີຜູ້ເຂົ້າຮ່ວມ ຫລາຍກວ່າ ເຄິ່ງໜຶ່ງ ຂອງຈໍານວນກໍາມະການ ໃນຄະນະບໍລິ ຫານງານ ຊປປລ ທັງໝົດຂອງຂັ້ນຕົນ ໂດຍແມ່ນເລຂາຄະນະບໍລິຫານງານ ຊປປລ ຂັ້ນນັ້ນ ເປັນຜູ້ຮຽກ ໂຮມ.

**ມາດຕາ 29. ມະຕິກອງປະຊຸມ**

ມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ, ກອງປະຊຸມວິສາມັນ ແມ່ນ ການຮັບຮອງເອົາເນື້ອໃນ ຂອງກອງປະຊຸມດັ່ງກ່າວ ຈາກຜູ້ແທນກອງປະຊຸມ. ມະຕິກອງປະຊຸມ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຖືກຮັບຮອງ

ເອົາດ້ວຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ.

## ພາກທີ V
## ຄວາມຮັບຜິດຊອບຂອງລັດ, ສັງຄົມ ແລະ ຄອບຄົວ ຕໍ່ຊາວໜຸ່ມ

**ມາດຕາ 30. ຄວາມຮັບຜິດຊອບຂອງລັດ**

ລັດ ກໍ່ສ້າງພື້ນຖານໂຄງລ່າງ, ສະໜອງພາຫະນະ, ວັດຖຸເຕັກນິກ ແລະ ສິ່ງທີ່ຈຳເປັນ ເພື່ອພັດທະນາຊາວໜຸ່ມໃຫ້ຂະຫຍາຍຕົວຮອບດ້ານ ເພື່ອປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຢ່າງມີປະສິດທິພາບ, ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ ຄຊປປລ ເຄື່ອນໄຫວປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດຂອງຕົນ ເປັນຢ່າງດີ ແລະ ສາມາດກຸ້ມຕົນເອງທາງດ້ານການເງິນເທື່ອລະກ້າວ.

**ມາດຕາ 31. ຄວາມຮັບຜິດຊອບຂອງສັງຄົມ ແລະ ຊຸມຊົນ**

ສັງຄົມ, ຊຸມຊົນ, ບ້ານ, ຜູ້ຊົງຄຸນວຸດທິ, ຫົວໜ່ວຍທຸລະກິດ, ໂຮງຈັກໂຮງງານ, ສະຖາບັນການສຶກສາຂັ້ນຕ່າງໆ ເປັນຕົ້ນ ໂຮງຮຽນສາມັນ, ໂຮງຮຽນວິຊາຊີບ ມີຄວາມຮັບຜິດຊອບ ໃນການສຶກສາອົບຮົມ, ການພັດທະນາ ແລະ ການປົກປ້ອງສິດ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ລວມທັງການເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບກົດໝາຍ ແລະ ມາດຕະການຕ່າງໆ ຂອງລັດ.

**ມາດຕາ 32. ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີຄວາມຮັບຜິດຊອບ ແລະ ໜ້າທີ່ສຳຄັນ ໃນການເບິ່ງແຍງລ້ຽງດູ, ສຶກສາອົບຮົມ, ເປັນແບບຢ່າງ, ໃກ້ຊິດຕິດແທດ, ໃຫ້ຄວາມອົບອຸ່ນ, ປຶກສາຫາລື, ໃຫ້ຄຳແນະນຳ, ຕິດຕາມ, ກວດກາ, ສ້າງເງື່ອນໄຂ ແລະ ຊຸກຍູ້ສົ່ງເສີມ ການເຄື່ອນໄຫວທີ່ເປັນປະໂຫຍດຂອງຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ຜູ້ເປັນລູກຫລານຂອງຕົນ ໃຫ້ເຄົາລົບ, ປະຕິບັດ ລະບຽບກົດໝາຍ, ປະຕິບັດພັນທະ, ໜ້າທີ່ ແລະ ພັດທະນາຕົນເອງ ຢ່າງຮອບດ້ານ.

# ພາກທີ VI
# ຂໍ້ຫ້າມ

**ມາດຕາ 33. ຂໍ້ຫ້າມສຳລັບສະມາຊິກ ຊປປລ**

ຫ້າມສະມາຊິກ ຊປປລ ມີ ການກະທຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຄວາມຮັບຜິດຊອບຂອງຕົນ ເພື່ອຫາຜົນປະໂຫຍດສ່ວນຕົວ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
2. ເມີນເສີຍຕໍ່ການປະຕິບັດໜ້າທີ່ ແລະ ພັນທະຂອງຕົນ;
3. ມົ້ວສຸມ ສິ່ງມຶນເມົາ, ການພະນັນ, ສິ່ງລາມົກ, ຜະລິດ, ຊື້-ຂາຍ, ຄອບຄອງ, ຂົນສົ່ງ ສິ່ງເສບຕິດ ແລະ ຜະລິດຕະພັນວັດທະນະທຳທີ່ຝືນຕໍ່ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ ແລະ ລະບຽບກົດໝາຍ;
4. ຖືອາວຸດເສິກ ຫລື ວັດຖຸລະເບີດທຸກຊະນິດ ໂດຍບໍ່ໄດ້ຮັບອະນຸຍາດ;
5. ຈັດຕັ້ງເປັນກຸ່ມກ້ອນ, ຊຸມນຸມປະທ້ວງ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ, ກໍ່ຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍ ໃນສັງຄົມ ແລະ ກໍ່ຄວາມເສຍຫາຍຕໍ່ການຈັດຕັ້ງ, ຊີວິດ, ຊັບສິນຂອງລັດ, ລວມໝູ່ ແລະ ບຸກຄົນ;
6. ໃສ່ຮ້າຍປ້າຍສີ, ແບ່ງແຍກຄວາມສາມັກຄີບັນດາເຜົ່າ ແລະ ຄວາມສາມັກຄີໃນໝູ່ຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ;
7. ມີການກະທຳອື່ນ ທີ່ເປັນການລະເມີດ ລະບຽບກົດໝາຍ.

**ມາດຕາ 34. ຂໍ້ຫ້າມສຳລັບຄະນະບໍລິຫານງານ ຊປປລ**

ຫ້າມຄະນະບໍລິຫານງານ ຊປປລ ມີ ການກະທຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
2. ຂັດຂວາງຄວາມກ້າວໜ້າ, ໄລ່ສະມາຊິກ ຊປປລ ອອກຈາກການຈັດຕັ້ງ ໂດຍບໍ່ມີເຫດຜົນ ແລະ ບໍ່ຖືກຕ້ອງຕາມກົດໝາຍ;
3. ເມີນເສີຍຕໍ່ການປະຕິບັດໜ້າທີ່ ເປັນຕົ້ນ ບໍ່ເຂົ້າຮ່ວມກອງປະຊຸມ ໂດຍບໍ່ມີເຫດຜົນ;
4. ຝ່າຝືນກົດລະບຽບ, ບໍ່ນັບຖືການຈັດຕັ້ງ ແລະ ປະຕິບັດໜ້າທີ່ວຽກງານເກີນຂອບເຂດສິດຂອງຕົນ;
5. ມີການກະທຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 35. ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ມີ ການກະທຳ ດັ່ງນີ້:

1. ສວຍໃຊ້ ຄຊປປລ, ຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ເຄື່ອນໄຫວ ເພື່ອຫາຜົນປະໂຫຍດສ່ວນຕົວ ກໍຄືການຈັດຕັ້ງຂອງຕົນ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ;

2. ຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ທີ່ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ;
3. ໂຄສະນາ ເຜີຍແຜ່ ສິ່ງເສບຕິດ, ສິ່ງມຶນເມົາ, ສິ່ງລາມົກ, ໃຫ້ຂໍ້ມູນຂ່າວສານ ທີ່ບໍ່ຖືກຕ້ອງ ເພື່ອສ້າງສິ່ງຈູງໃຈ, ຊັກຊວນ ແລະ ເບື່ອເມົາຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ໃຫ້ມີການຫລົງໄຫລ, ປະພຶດຕົນ ທີ່ຝືນຕໍ່ວັດທະນະທຳ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ ແລະ ລະບຽບກົດໝາຍ;
4. ເມີນເສີຍຕໍ່ຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ທີ່ຕົນເຫັນວ່າ ຈະມີການກໍ່ການກະທຳຜິດ;
5. ຄ້າຂາຍມະນຸດ, ຂູດຮີດແຮງງານ ຫລື ຂູດຮີດທາງເພດ ເປັນຕົ້ນ ຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ;
6. ມີການກະທຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ VII
## ການເງິນ ແລະ ງົບປະມານຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ

### ມາດຕາ 36. ແຫລ່ງລາຍຮັບ

**ແຫລ່ງລາຍຮັບ ເພື່ອສະໜອງໃຫ້ແກ່ການເຄື່ອນໄຫວວຽກງານ ຂອງ ຄຊປປລ ໄດ້ມາຈາກ:**

- ງົບປະມານຂອງລັດ;
- ເງິນບຳລຸງຂອງສະມາຊິກ ຊປປລ;
- ກອງທຶນພັດທະນາຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ;
- ລາຍຮັບຈາກການເຄື່ອນໄຫວດຳເນີນທຸລະກິດ ຂອງຊາວໜຸ່ມ;
- ການຊ່ວຍເຫລືອຂອງບຸກຄົນ, ການຈັດຕັ້ງ ຫລື ນິຕິບຸກຄົນ ແລະ ອົງການຈັດຕັ້ງສາກົນ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ;
- ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

### ມາດຕາ 37. ການຄຸ້ມຄອງລາຍຮັບ

ຄຊປປລ ແຕ່ລະຂັ້ນ ຄຸ້ມຄອງລາຍຮັບຂອງຕົນ ຢ່າງລວມສູນ ແລະ ເປັນເອກະພາບ, ປະຕິບັດລະບອບບັນຊີລາຍຮັບ-ລາຍຈ່າຍ ຕາມລະບຽບການເງິນ ແລະ ງົບປະມານ, ສະຫລຸບ ລາຍງານປະຈຳເດືອນ, ງວດ, ປີ ແລະ ຫ້າປີ.

ເງິນບຳລຸງ ຂອງສະມາຊິກ ຊປປລ ຂັ້ນລຸ່ມ ຕ້ອງສົ່ງໃຫ້ ຄຊປປລ ຂັ້ນເທິງຖັດຕົນ ຕາມລະບຽບການ.

**ມາດຕາ 38. ການນຳໃຊ້ລາຍຮັບ**

ການນຳໃຊ້ລາຍຮັບຂອງ ຄຊປປລ ແຕ່ລະຂັ້ນ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດແຜນພັດທະນາຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ;
2. ການຈັດກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ;
3. ວຽກງານບໍລິຫານ ແລະ ການສົ່ງເສີມວິຊາການ;
4. ການເຄື່ອນໄຫວຂະບວນການຂອງ ຄຊປປລ;
5. ການປະຕິບັດວຽກງານອື່ນ ຕາມລະບຽບການ.

# ພາກທີ VIII
# ການຄຸ້ມຄອງ ແລະ ການກວດກາ
## ໝວດທີ 1
## ການຄຸ້ມຄອງວຽກງານຂອງ ຄຊປປລ

**ມາດຕາ 39. ອົງການຄຸ້ມຄອງວຽກງານຂອງ ຄຊປປລ**

**ອົງການຄຸ້ມຄອງວຽກງານຂອງ ຄຊປປລ ປະກອບດ້ວຍ :**

1. ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
2. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນ, ກະຊວງ, ອົງການ;
3. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເມືອງ, ເທດສະບານ;
4. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຮາກຖານ.

ໃນກໍລະນີທີ່ມີຄວາມຈຳເປັນ ອາດຈະສ້າງຕັ້ງຄະນະກຳມະການແຫ່ງຊາດ ເພື່ອຄຸ້ມຄອງ ແລະ ພັດທະນາ ຊາວໜຸ່ມ.

**ມາດຕາ 40. ສິດ ແລະ ໜ້າທີ່ ຂອງສູນກາງ ຊປປລ**

**ໃນການຄຸ້ມຄອງວຽກງານຂອງຕົນ ສູນກາງ ຊປປລ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້າ ຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ຄົ້ນຄວ້າ, ຫັນແນວທາງນະໂຍບາຍ, ລະບຽບກົດໝາຍ, ຍຸດທະສາດ, ແຜນນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ, ມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນໃຫ້ເປັນແຜນການ, ແຜນງານ, ໂຄງການ, ມະຕິ, ຄຳສັ່ງ, ຄຳແນະນຳ ໃຫ້ເປັນກິດຈະກຳລະອຽດ ເພື່ອໂຄສະນາເຜີຍແຜ່, ສຶກສາອົບຮົມ ແລະ ຈັດຕັ້ງປະຕິບັດ;
3. ສະເໜີ ປັບປຸງນິຕິກຳ ຫລື ການກະທຳ ຂອງການຈັດຕັ້ງອື່ນ ທີ່ເຫັນວ່າ ຂັດກັບສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຊາວໜຸ່ມ;

4. ພິຈາລະນາ, ສະເໜີການແຕ່ງຕັ້ງ, ໂຍກຍ້າຍ, ປະຕິບັດນະໂຍບາຍ, ປະຕິບັດວິໄນ ຕໍ່ສະມາຊິກ ແລະ ພະນັກງານຊາວໜຸ່ມ ຂັ້ນຂອງຕົນ;
5. ຊີ້ນໍາ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ລະບຽບກົດໝາຍ, ມະຕິ, ແຈ້ງການ ແລະ ຄໍາແນະນໍາ ກ່ຽວກັບວຽກງານຊາວໜຸ່ມ ໃນທົ່ວປະເທດ;
6. ພິຈາລະນາ, ສະເໜີການສ້າງຕັ້ງ, ປັບປຸງ, ຍຸບເລີກການຈັດຕັ້ງຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ, ແນະນໍາ ການສ້າງຕັ້ງ, ປັບປຸງ ຫລື ຍຸບເລີກກິງຈັກການຈັດຕັ້ງ ແລະ ບັນດານິຕິກໍາຂອງ ຄຊປປລ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ ທີ່ເຫັນວ່າບໍ່ສອດຄ່ອງກັບລະບຽບກົດໝາຍ ແລະ ມະຕິຂອງຕົນ;
7. ຊອກລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;
8. ຮັບຄໍາສະເໜີ ຂອງຊາວໜຸ່ມລາວບັນດາເຜົ່າ ເພື່ອພິຈາລະນາແກ້ໄຂຕາມພາລະບົດບາດຂອງຕົນ;
9. ພົວພັນ, ປະສານສົມທົບ ແລະ ຮ່ວມມື ກັບບັນດາການຈັດຕັ້ງອື່ນ ທີ່ກ່ຽວຂ້ອງທັງພາຍໃນ, ຕ່າງປະເທດ, ພາກພື້ນ ແລະ ສາກົນ ເພື່ອພັດທະນາຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ;
10. ສະຫລຸບ, ລາຍງານ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ໃນຂອບເຂດທົ່ວປະເທດ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 41. ສິດ ແລະ ໜ້າທີ່ຂອງ ຄຊປປລ ແຂວງ, ນະຄອນ, ກະຊວງ, ອົງການ**

**ໃນການຄຸ້ມຄອງວຽກງານຂອງຕົນ ຄຊປປລ ແຂວງ, ນະຄອນ ກະຊວງ, ອົງການ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ແນວທາງ, ນະໂຍບາຍ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ, ມະຕິ, ຄໍາສັ່ງ, ຄໍາແນະນໍາ ຂອງຂັ້ນເທິງ ໃຫ້ແກ່ຊາວໜຸ່ມ;
2. ປະກອບຄໍາຄິດຄໍາເຫັນ, ຄົ້ນຄວ້າ ຜັນຂະຫຍາຍ ນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ, ນະຄອນ, ກະຊວງ, ອົງການ, ມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ ແລະ ຂັ້ນຂອງຕົນ ໃຫ້ເປັນແຜນການ, ໂຄງການ ແລະ ກິດຈະກໍາລະອຽດ ເພື່ອຈັດຕັ້ງປະຕິບັດ;
3. ແນະນໍາ, ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ, ລະບຽບກົດໝາຍ, ມະຕິ, ແຈ້ງການ ແລະ ຄໍາແນະນໍາກ່ຽວກັບວຽກງານຊາວໜຸ່ມໃນຂອບເຂດຕົນຮັບຜິດຊອບ;
4. ພິຈາລະນາ, ສະເໜີການສ້າງຕັ້ງ, ປັບປຸງ, ຍຸບເລີກການຈັດຕັ້ງຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ, ແນະນໍາ ການສ້າງຕັ້ງ, ປັບປຸງ ຫລື ຍຸບເລີກ ກົງຈັກການຈັດຕັ້ງ ແລະ ບັນດານິຕິກໍາ ຂອງ ຄຊປປລ ຂັ້ນຂອງຕົນ ແລະ ຂັ້ນລຸ່ມ ທີ່ເຫັນວ່າບໍ່ສອດຄ່ອງ ກັບລະບຽບກົດໝາຍ ແລະ ມະຕິຂອງຕົນ;

5. ກໍ່ສ້າງ, ປັບປຸງ ຄວາມເຂັ້ມແຂງ ຂອງ ຄຊປປລ, ຂະຫຍາຍການຈັດຕັ້ງ ຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ເຂົ້າໃນທຸກຂົງເຂດວຽກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
6. ຊອກລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;
7. ຮັບຄຳສະເໜີ ຂອງຊາວໜຸ່ມລາວບັນດາເຜົ່າ ເພື່ອພິຈາລະນາແກ້ໄຂຕາມຂອບເຂດ ຄວາມຮັບຜິດຊອບຂອງຕົນ;
8. ພົວພັນ, ປະສານສົມທົບ ແລະ ຮ່ວມມື ກັບບັນດາການຈັດຕັ້ງອື່ນ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງ ຕາມການມອບໝາຍຂອງຂັ້ນເທິງ;
9. ສະຫລຸບ, ລາຍງານ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ໃນຂອບເຂດ ທີ່ຕົນຮັບຜິດຊອບ ຕໍ່ສູນກາງ ຊປປລ ຫລື ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 42. ສິດ ແລະ ໜ້າທີ່ຂອງ ຄຊປປລ ເມືອງ, ເທດສະບານ**

**ໃນການຄຸ້ມຄອງວຽກງານຂອງຕົນ ຄຊປປລ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ເຜີຍແຜ່, ສຶກສາອົບຮົມ ແນວທາງ, ນະໂຍບາຍ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ, ມະຕິ, ຄຳສັ່ງ, ຄຳແນະນຳ ຂອງຂັ້ນເທິງ ໃຫ້ແກ່ຊາວໜຸ່ມ;
2. ຄົ້ນຄວ້າ ຜັນຂະຫຍາຍ ນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງ, ເທດສະບານ, ມະຕິກອງປະຊຸມໃຫຍ່ ຄຊປປລ ແຂວງ, ນະຄອນ, ກະຊວງ, ອົງການ ແລະ ຂັ້ນຂອງຕົນ ໃຫ້ເປັນແຜນການ, ໂຄງການ ແລະ ກິດຈະກຳລະອຽດ ເພື່ອຈັດຕັ້ງປະຕິບັດ;
3. ຕິດຕາມ, ຊຸກຍູ້ ວຽກງານການປັບປຸງ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ຂັ້ນຂອງຕົນ ແລະ ຂັ້ນຮາກຖານ ໃຫ້ເຂັ້ມແຂງ;
4. ກໍ່ສ້າງ, ປັບປຸງຄວາມເຂັ້ມແຂງ ຂອງ ຄຊປປລ, ຂະຫຍາຍການຈັດຕັ້ງ ຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ເຂົ້າໃນທຸກຂົງເຂດວຽກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
5. ຊອກລາຍຮັບ ດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;
6. ຮັບຄຳສະເໜີ ຂອງຊາວໜຸ່ມລາວບັນດາເຜົ່າ ເພື່ອພິຈາລະນາແກ້ໄຂຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ;
7. ພົວພັນ ແລະ ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານຂອງຕົນ ຕາມລະບຽບກົດໝາຍ;
8. ສະຫລຸບ, ລາຍງານ ກ່ຽວກັບວຽກງານຊາວໜຸ່ມ, ເຍົາວະຊົນ-ອະນຸຊົນ ໃນຂອບເຂດທີ່ຕົນຮັບຜິດຊອບຕໍ່ ຄຊປປລ ຂັ້ນເທິງຖັດຕົນ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 43. ສິດ ແລະ ໜ້າທີ່ຂອງ ຄຊປປລ ຮາກຖານ**

ໃນການຄຸ້ມຄອງວຽກງານຂອງຕົນ ຄຊປປລ ຮາກຖານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມ ແນວທາງ, ນະໂຍບາຍ, ລະບຽບກົດໝາຍ, ກົດລະບຽບ, ມະຕິ, ຄຳແນະນຳ ຂອງ ຄຊປປລ ຂັ້ນເທິງ ໃຫ້ຊາວໜຸ່ມໃນຮາກຖານຂອງຕົນ;
2. ເຕົ້າໂຮມຄວາມສາມັກຄີ, ສ້າງຂະບວນການ ຂອງຊາວໜຸ່ມ ໂດຍຕິດພັນກັບການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ເຂົ້າຮ່ວມໃນການແກ້ໄຂປາກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ປະສານສົມທົບກັບການຈັດຕັ້ງອື່ນ, ຄອບຄົວ ຫລື ຜູ້ປົກຄອງ ໃນການປັບປຸງ, ກໍ່ສ້າງ ຄຊປປລ ໃຫ້ເຕີບໃຫຍ່ເຂັ້ມແຂງ;
5. ນຳພາຊາວໜຸ່ມ ສ້າງລາຍຮັບດ້ວຍຮູບການຕ່າງໆ ທີ່ຖືກຕ້ອງຕາມລະບຽບກົດໝາຍ ເພື່ອຮັບໃຊ້ເຂົ້າໃນວຽກງານຂອງຕົນ;
6. ສະຫລຸບ, ລາຍງານກ່ຽວກັບວຽກງານຂອງ ຄຊປປລ ໃນຂອບເຂດຄວາມຮັບຜິດຊອບຂອງຕົນຕໍ່ ຄຊປປລ ຂັ້ນເທິງຖັດຕົນ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2
## ການກວດກາວຽກງານຂອງ ຄຊປປລ

**ມາດຕາ 44. ອົງການກວດກາວຽກງານຂອງ ຄຊປປລ**

ອົງການກວດກາວຽກງານຂອງ ຄຊປປລ ແມ່ນ ພາກສ່ວນໜຶ່ງຂອງອົງການຄຸ້ມຄອງວຽກງານຂອງ ຄຊປປລ ຊຶ່ງຮັບຜິດຊອບ ໂດຍຄະນະກວດກາ ຂອງ ຄຊປປລ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 39 ຂອງກົດໝາຍສະບັບນີ້.

**ມາດຕາ 45. ສິດ ແລະ ໜ້າທີ່ຂອງອົງການກວດກາວຽກງານຂອງ ຄຊປປລ**

ອົງການກວດກາວຽກງານຂອງ ຄຊປປລ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ທວງເອົາເອກະສານ ກ່ຽວກັບວຽກງານຊາວໜຸ່ມ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;
2. ລົງກວດກາເປົ້າໝາຍກັບທີ່ ພາຍຫລັງທີ່ໄດ້ຮັບການລາຍງານ ຫລື ຂໍ້ມູນກ່ຽວກັບວຽກງານຊາວໜຸ່ມ;
3. ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາໂຈະ, ຍົກເລີກນິຕິກຳ ຂອງ ຄຊປປລ ທີ່ຂັດກັບລະບຽບກົດໝາຍ ຫລື ການກະທຳ, ການປະຕິບັດນິຕິກຳ ທີ່ບໍ່ຖືກຕ້ອງຂອງຄະນະບໍລິຫານງານ ແລະ ສະມາຊິກ ຊປປລ;

4. ພົວພັນ, ປະສານສົມທົບ ກັບຄະນະກວດກາ, ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນອື່ນ ໃນຂັ້ນດຽວກັນ ໃນການປະຕິບັດວຽກງານຂອງຕົນ;
5. ສະເໜີນຳໃຊ້ວິທີການ ແລະ ມາດຕະການ ແກ້ໄຂຜົນຂອງການກວດກາ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 46. ເນື້ອໃນການກວດກາ**

ການກວດກາ ມີເນື້ອໃນ ຕົ້ນຕໍ ດັ່ງນີ້:

1. ການປະຕິບັດໜ້າທີ່, ຄວາມຮັບຜິດຊອບ ແລະ ແບບແຜນວິທີເຮັດວຽກ ຂອງຄະນະບໍລິຫານງານ ແລະ ສະມາຊິກ ຊປປລ ໃນການປະຕິບັດ ລະບຽບກົດໝາຍ, ກົດລະບຽບ, ມະຕິກອງປະຊຸມຂັ້ນຂອງຕົນ ແລະ ຂັ້ນລຸ່ມ;
2. ການອອກມະຕິ, ແຜນການ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຂອງ ຄຊປປລ;
3. ການຄຸ້ມຄອງ, ການນຳໃຊ້, ການປະຕິບັດນະໂຍບາຍ ຕໍ່ສະມາຊິກ ຊປປລ ລວມທັງການປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງຊາວໜຸ່ມ;
4. ການຄຸ້ມຄອງ, ການນຳໃຊ້ງົບປະມານ, ການເງິນ, ວັດຖຸ ແລະ ຊັບສິນຂອງການຈັດຕັ້ງຊາວໜຸ່ມຂັ້ນຂອງຕົນ.

**ມາດຕາ 47. ປະເພດການກວດກາ**

ການກວດກາມີ ສອງ ປະເພດ ດັ່ງນີ້:

- ການກວດກາພາຍໃນ ຊຶ່ງດຳເນີນໂດຍຄະນະກວດກາ ຂອງ ຄຊປປລ;
- ການກວດກາພາຍນອກ ຊຶ່ງດຳເນີນໂດຍ ສະພາແຫ່ງຊາດ ແລະ ຄະນະກຳມະການກວດກາພັກ.

**ມາດຕາ 48. ຮູບການ ການກວດກາ**

ການກວດກາສາມາດດຳເນີນຕາມແຜນການປົກກະຕິ, ນອກແຜນການ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແລະ ແບບກະທັນຫັນ.

## ພາກທີ IX
## ວັນສ້າງຕັ້ງ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

**ມາດຕາ 49. ວັນສ້າງຕັ້ງ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ວັນສ້າງຕັ້ງ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແມ່ນ ວັນທີ 14 ເມສາ 1955.

**ມາດຕາ 50. ເຄື່ອງໝາຍ ແລະ ເຄື່ອງແບບ**

ຄຊປປລ ມີທຸງ, ເຄື່ອງໝາຍ ແລະ ເຄື່ອງແບບຕາມຮູບແບບທີ່ໄດ້ຖືກຮັບຮອງເອົາ ໃນກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມທົ່ວປະເທດ.

**ມາດຕາ 51. ຕາປະທັບ**

ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ ໂດຍທົ່ວໄປ ຄຊປປລ ແຕ່ລະຂັ້ນ ມີຕາປະທັບ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 52. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍວ່າດ້ວຍ ຄຊປປລ ເປັນຕົ້ນການສຶກສາອົບຮົມ, ການເຕົ້າໂຮມຄວາມສາມັກຄີ, ການສ້າງຂະບວນການ, ການຊ່ວຍເຫລືອສະໜັບສະໜູນ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 53. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ: ກໍ່ຄວາມເສຍຫາຍ ໃຫ້ແກ່ກຽດສັກສີ, ຜົນປະໂຫຍດຂອງ ຄຊປປລ, ລະເມີດສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຊາວໜຸ່ມ ຈະຖືກປະຕິບັດ ມາດຕະການສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫລື ດຳເນີນຄະດີ ແລ້ວແຕ່ກໍລະນີເບົາ ຫລື ໜັກ ຕາມລະບຽບກົດໝາຍ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 54. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

**ມາດຕາ 55. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ທອງສິງ ທຳມະວົງ